ຂັ້ນຕອນການລ້ຽງປາດຸກໃນໜອງຜ້າຢາງຢູ່ພື້ນທີ ປູກຜັກສວນຄົວ

16

1 ການເລືອກສະຖານທີ່

- ການເລືອກສະຖານທີ່ຈະລ້ຽງປາດຸກໃນໜອງຜ້າຢາງຄວນເລືອກບ່ອນທີ່ຕ່ຳ ແລະ ໃນເຂດສວນຜັກຄົວເຮືອນ.
- ພື້ນທີ່ຕ້ອງໃກ້ແຫຼ່ງນ້ຳໃຊ້ເຊັ່ນ: ນ້ຳສ້າງ ຫຼື ນ້ຳບາດານ.
- ພື້ນທີ່ບ່ອນລ້ຽງປາຄວນມີຮົ່ມຕົ້ນໄມ້ເພື່ອປ້ອງກັນບໍ່ໃຫ້ໜອງປາຕາກແດດຫຼາຍ,ຖ້ານ້ຳຮ້ອນຫຼາຍຈະເຮັດໃຫ້ນ້ຳໃນໜອງປາແຫ້ງໄວ ແລະ ມີຜົນກະທົບຕໍ່ການລ້ຽງປາ.

2 ການກະກຽມໜອງຜ້າຢາງ

- ເລືອກສະຖານທີ່ໄດ້ແລ້ວໃຫ້ຂຸດໜອງມີຂະໜາດ 3x4 ແມັດ, ເລິກປະມານ 80 ຊມ ຕາມຮູບພາບ.
- ຕັດຜ້າຢາງສີດຳໃຫ້ໄດ້ຂະໜາດ 4x8 ແມັດ ແລ້ວປູຜ້າຢາງໃສ່ໜອງທີ່ຂຸດໄວ້.
- ໃສ່ທໍ່ລະບາຍນ້ຳເພື່ອສະດວກໃນການປ່ຽນຖ່າຍນ້ຳ, ຫຼັງຈາກນັ້ນເອົານ້ຳເຂົ້າໃສ່ໜອງ.

1

2

3

4

3 ລັກສະນະຂອງລູກປາ

- ການລອຍໄປມາຂອງລູກປາ ຫຼື ເຄື່ອນໄຫວຄ່ອງແຄ້ວ ແລະ ລູກປາບໍ່ລອຍຕັ້ງສາກັບນ້ຳ.
- ລຳໂຕສົມບູນ, ໜວດ, ຫາງ, ຄີບ່ກຸດຫ້ຽນ, ບໍ່ມີບາດແຜຕາມໂຕ.
- ຂະໜາດຂອງລູກປາຕ້ອງສະໝ່ຳສະເໝີ, ເພາະປາດຸກເປັນປາກິນຊີ້ນ, ຖ້າອາຫານບໍ່ພຽງພໍ ລູກປາຈະກິນກັນເອງ.

4 ອັດຕາການປ່ອຍລ້ຽງ

- ລູກປາທີ່ເລີ້ມເອົາມາລ້ຽງຈະມີຂະໜາດ 5-7 ຊັງຕີແມັດຄວນປ່ອຍໃນອັດຕາ 50 ໂຕ/ມ^2.
- ແຊ່ຖົງລູກປາໄວ້ປະມານ 10-15 ນາທີກ່ອນຈຶ່ງປ່ອຍລົງລ້ຽງໄດ້.
- ການນຳລູກປາມາປ່ອຍໃນຕອນເຊົ້າ ຫຼື ຕອນແລງ ເພື່ອປ້ອງກັນບໍ່ໃຫ້ປາຊ໋ອກຕາຍ.

ຕົວຢ່າງ: ອັດຕາການປ່ອຍແນວພັນປາດຸກລ້ຽງໃນໜອງຂະໜາດ 3 x 4 ແມັດ

ຮູບແບບການລ້ຽງ	ຂະໜາດ (ແມັດ)	ຈຳນວນການປ່ອຍ (ໂຕ)
ການລ້ຽງໃນຄອກໜອງດິນ ຫຼື ອ່າງຊີມັ້ງ	3x4	2,500

5 ປະເພດອາຫານ ແລະ ວິທີການໃຫ້ອາຫານ

- ອາຫານລ້ຽງປາທີ່ນິຍົມໃຫ້ແມ່ນອາຫານສຳເລັດຮູບທີ່ມີທາດໂປຼຕີນ 35 ເປີເຊັນຂຶ້ນໄປ, ແລະ ມີ 3 ຂະໜາດ (ປາດຸກນ້ອຍ, ກາງ ແລະ ໃຫຍ່).
- ອາຫານຈາກທຳມະຊາດເຊັ່ນ:ແມງໄມ້ຊະນິດຕ່າງໆ,ປວກ, ຫອຍ, ກະປຸ ແລະ ຂີ້ກະເດືອນ.
- ຂີ້ກະເດືອນເຮົາສາມາດລ້ຽງໄດ້, ເປັນຊະນິດແນວພັນຂະໜາດນ້ອຍ, ສາມາດຂະຫຍາຍພັນໄດ້ໄວ ແລະ ຈຳນວນຫຼາຍ.
- ການໃຫ້ອາຫານໃນໄລຍະປາດຸກຍັງນ້ອຍ ແມ່ນໃຫ້ອາຫານສຳເລັດຮູບປາດຸກນ້ອຍ, ກ່ອນໃຫ້ອາຫານແມ່ນເອົາມາແຊ່ນ້ຳແລ້ວຈຶ່ງໃຫ້ປາກິນ, ການໃຫ້ແມ່ນໃຫ້ໃນປະລິມານ 10-12 ເປີເຊັນ ຂອງນ້ຳໜັກປາຕໍ່ວັນ ແລະ ໃຫ້ 2 ຄັ້ງ (ເຊົ້າ ແລະ ແລງ).
- ຖ້າປາຂະໜາດໃຫຍ່ຂຶ້ນໃນເດືອນທີ3 ແມ່ນໃຫ້ອາຫານໃນອັດຕາ 3-5 ເປີເຊັນ ຂອງນ້ຳໜັກປາທັງໝົດຕໍ່ວັນ ແລະ ໃຫ້ 2 ຄັ້ງ.

ຕົວຢ່າງ: ເປີເຊັນ ແລະ ໄລຍະເວລາການໃຫ້ອາຫານລູກປາ (2,500ໂຕ)

ໄລຍະເວລາ (ອາທິດ)	ເປີເຊັນຂອງອາຫານ /ນ້ຳໜັກປາ/ວັນ	ປະລິມານອາຫານ ໃຫ້ປາໃນໜຶ່ງວັນ
1-2	12 %	400-800 ກຼາມ
3-4	10 %	1,200-1,600 ກຼາມ
5-8	8 %	4- 6ກິໂລກຼາມ
9-12	5 %	6-8 ກິໂລກຼາມ
13-16	3 %	8-10 ກິໂລກຼາມ

6 ການບໍລະບັດຮັກສາ ແລະ ເກັບກູ້ຜົນຜະລິດ

- ອາຫານກຸ່ມຜິດຜັກ ເຊັ່ນ: ຜັກບົ່ບໍ່ຄວນໃຫ້ອາຫານຫຼາຍເກີນໄປຈະເຮັດໃຫ້ນ້ຳເນົ່າເສຍ.
- ການລ້ຽງປາໃນໜອງຜ້າຢາງຄວນເອົາຜັກຕົບມາໃສ່ໃນໜອງເພື່ອເປັນບ່ອນລີ້ຊ້ອນຂອງປານ້ອຍທີ່ນຳມາລ້ຽງໃໝ່.
- ຜັກຕົບຍັງຊ່ວຍຮັກສາອຸນຫະພູມນ້ຳໃນໜອງຜ້າຢາງບໍ່ໃຫ້ຮ້ອນຫຼາຍ ແລະ ຍັງຊ່ວຍຮັກສານ້ຳບໍ່ໃຫ້ເນົ່າເສຍໄວ.
- ຖ້ານ້ຳເນົ່າເສຍຄວນປ່ຽນຖ່າຍນ້ຳໃໝ່ເຂົ້າ ແລະ ຈະເຮັດໃຫ້ປາກິນອາຫານໄດ້ດີ ແລະ ປາຈະໃຫຍ່ໄວ.
- ຖ້າເຮົາການລ້ຽງປາ 4 ຫາ 5 ເດືອນ, ຈະໄດ້ປາທີ່ມີຂະໜາດ 6 - 7 ໂຕ/1 ກລ, ແລະ ສາມາດຈັບປາທີ່ມີຂະໜາດໃຫຍ່ຂາຍ ຫຼື ນຳມາບໍລິໂພກໄດ້.

NAFRI

DTFAD

IFAD
Investing in rural people

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la